ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຈຳປາສັກ

ພະແນກການເງິນ

ເລກທີ 1446/ກງຂ.

ແຂວງຈຳປາສັກ, ວັນທີ 12 / 08 / 2026.

# ແຈ້ງການ

ເຖິງ: ບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ທາບທາມລາຄາ ໂຄງການກໍ່ສ້າງ ຮົ້ວ, ຕາຂ່າຍໄຟຟ້າ ແລະ ສູນໄອທີ ຂົງເຂດການເງິນ ປະຈຳສົກປີ 2026 ດ້ວຍການນຳໃຊ້ງົບປະມານບ້ວງບຳເນັດເກີນແຜນ ປີ 2025.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ມະຕິຕົກລົງ ວ່າດ້ວຍການຮັບຮອງ ການຈັດສັນບ້ວງເງິນເກັບລາຍຮັບເກີນແຜນປີ 2025 ສະບັບເລກທີ 32 /ຄປຈ. ສພຂ, ລົງວັນທີ 26 ມິຖຸນາ 2026 ແລະ ມະຕິຕົກລົງ ວ່າດ້ວຍການຮັບຮອງ ໂຄງການລົງທຶນຂອງລັດ ສະບັບເລກທີ 46/ຄປຈ. ສພຂ, ລົງວັນທີ 21 ກໍລະກົດ 2026;
- ອີງຕາມ ການຈັດສັນແຜນງົບປະມານ ບ້ວງບຳເນັດເກີນແຜນ ປີ 2025 ຂອງແຂວງຈຳປາສັກ ສະບັບເລກທີ 795/ກງຂ.ຈສ, ລົງວັນທີ 26 /5 / 2026;
- ອີງຕາມ ຂໍ້ຕົກລົງ ອະນຸມັດການກໍ່ສ້າງ ແລະ ແຕ່ງຕັ້ງກຳມະການຮັບຜິດຊອບໂຄງການ ສະບັບເລກທີ 774/ຄປຂ, ລົງວັນທີ 11 ສິງຫາ 2026;

<u>ມີຈຸດປະສົງ:</u> ເຊີນບັນດາບໍລິສັດຜູ້ຮັບເໝົາກໍ່ສ້າງ ທີ່ມີຄວາມສົນໃຈເຂົ້າຮ່ວມຊື້ຊອງທາບທາມລາຄາ ຈຳນວນ 1 ໂຄງການ ດັ່ງລາຍລະອຽດລຸ່ມນີ້:

| ລ/ດ | ຊື່ກິດຈະກຳ | ເມືອງ | ແຂວງ | ຂະໜາດອາຄານ |
|---|---|---|---|---|
| 1 | ໂຄງການ ກໍ່ສ້າງຮົ້ວ, ຕາຂ່າຍໄຟຟ້າ ແລະ ສູນໄອທີ ໂຂງເຂດການເງິນ | ນະຄອນປາກເຊ | ຈຳປາສັກ | |

❖ ເງື່ອນໄຂຂອງຜູ້ເຂົ້າຮ່ວມ ການປະມູນສົມທຽບລາຄາ ລະອຽດດັ່ງລຸ່ມນີ້:

1. ຕ້ອງມີໃບອະນຸຍາດດຳເນີນທຸລະກິດ 2026, ໃບທະບຽນວິສາຫະກິດ ເປັນບໍລິສັດກໍ່ສ້າງເຄຫາສະຖານ ແລະ ມີໃບຢັ້ງຢືນວ່າໄດ້ເສຍອາກອນ ຖືກຕ້ອງທາງກົດໝາຍ ຄັດຕິດພັງສືສະເໜີ ລາຄາສະເໜີໃນມື້ເປີດຊອງ.
2. ຕ້ອງເຫັນດີຈິ່ງໃຈ ປະຕິບັດໃນເອກະສານສັນຍາ, ຂໍ້ກຳນົດ ແລະ ກົດລະບຽບຕ່າງໆທີ່ກຳນົດໄວ້.

3. ບໍລິສັດ ຕ້ອງມີທຸກລາຍການເຄື່ອງວັດສະດຸ ແລະ ສະເໜີລາຄາໃນຫົວໜ່ວຍລາຄາ, ລາຄາລວມ ແຕ່ລະລາຍການ ລາຄາລວມຍອດທັງໝົດຢ່າງຈະແຈ້ງ.
4. ຕ້ອງສະເໜີລາຄາຄົບຖ້ວນ ທັງໝົດລາຍການ, ຕົວເລກມູນຄ່າການປະມູນຕ້ອງຈະແຈ້ງ ຫ້າມມີຮອຍຂີດຂ້າ ແລະ ຮອຍລຶບເດັດຂາດ.
5. ມູນຄ່າຫົວໜ່ວຍລາຄາໃນມື້ເປີດຊອງບໍລິສັດທີ່ໄດ້ທີ 01 ຈະໄດ້ຄົ້ນຄ້ວາເອກະສານ ເພື່ອກວດກາເງື່ອນໄຂ ຄົບຖ້ວນຈາກຄະນະກອງເລຂາ ແລ້ວສົ່ງເອກະສານໃຫ້ປະທານເປັນຜູ້ຕັດສິນໃນມື້ເປີດຊອງ.
6. ບໍລິສັດທີ່ຊະນະການປະມູນຕ້ອງໄດ້ເຊັນສັນຍາຕ້ອງໄດ້ສຳລະຄ່າອອກແບບໃຫ້ແກ່ບໍລິສັດຜູ້ອອກແບບ ກ່ອນລົງມືປະຕິບັດ.

ບໍລິສັດ ທີ່ມີຄວາມສົນໃຈ ເຊີນຕິດຕໍ່ພົວພັນ ແລະ ສອບຖາມລາຍລະອຽດໄດ້ທີ່ ພະແນກການເງິນແຂວງ, ມູນຄ່າຊອງລະ 1,500,000 ກີບ, ວັນເວລາສົ່ງຊອງກ່ອນເວລາ 10... ໂມງຂອງວັນທີ 15./09./2026 ຈະໄດ້ເປີດຊອງຊ້ອງໜ້າກຳມະການ ແລະ ບໍລິສັດຜູ້ເຂົ້າຮ່ວມປະມູນ ໃນເວລາ .10.00... ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ພະແນກການເງິນແຂວງ ຈຶ່ງໄດ້ແຈ້ງມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ ເພື່ອຊາບ ແລະ ເຂົ້າຮ່ວມການທາບທາມ ປະມູນຄັ້ງນີ້ດ້ວຍ.

ຫົວໜ້າພະແນກ

ກະຊວງການເງິນ
ພະແນກ ການເງິນ
ແຂວງຈຳປາສັກ

ສະໜັ່ນ ສີດາວົງ